# <u>ຂໍ້ປະທວງເຖິງສິດທິຕໍ່ມະຫາອຳນາດ</u>
# ເພື່ອ<u>ປະຊາທິປະໄຕຂອງລາວ</u>

ຣະບອບປະຊາທິປະໄຕນັ້ນແມ່ນໃຫ້ທຸກຄົນໃນຊາຕໄດ້ເຂົ້າໃຈແຈ່ມແຈ້ງນັບແຕ່ອົງການ
ບໍຣິຫານຂັ້ນສູງ ເຖິງພື້ນຖານ ຕ້ອງນຳຣະບອບປະຊາທິປະໄຕ ລົງປະຕິບັດໃນທຸກຣະ
ຫຣັບຂັ້ນ ຂອງການປົກຄອງນັບຕັ້ງແຕ່ພື້ນຖານຂື້ນເຖິງຂັ້ນສູງ ຕ້ອງນຳເອົາສິດເສຣີ
ພາບແລະໜ້າທີ່ຂອງທຸກຄົນໄປເຜີຍແຜ່ໃຫ້ແຈ່ມແຈ້ງແລະ ຊາບຊຶ້ງເຂົ້າໃຈໃຫ້ມີຄວາມກ້າ
ຫານຕໍ່ທຸກສະພາບການຂອງບັນຫາ ພ້ອມນັກຮຽນນັກສຶກສາຈົນເຖິງປັນຍາຊົນໃຫ້ພ້ອມ
ພາກັນຕື່ນຕົວແລ້ວຮັບຮູ້ໃນດ້ານການເມືອງການປົກຄອງຂອງລາວເພື່ອໃຫ້ຮູ້ໃນຣະບອບ
ປະຊາທິປະໄຕທີ່ຖືກຕ້ອງຕາມກົດໝາຍສາກົນຂອງໂລກ ພວກເຮົາຕ້ອງມາປະກອບສ່ວນ
ໃນການສ້າງອະນຸຊົນຂອງຫຣັກປະຊາທິປະໄຕແລະໃຫ້ຮັບຮູ້ເຂົ້າໃຈແນວທາງກ້າວເດີນ
ຂອງຊາຕແລ້ວໃຫ້ຕື່ນຕົວດຸໝັ່ນຮ່ຳຮຽນໃນການສຶກສາວັທນະທັມສັງຄົມເພື່ອເປັນການເປີດ
ກວ້າງເຫັນແຈ້ງໃຫ້ໄກໃນທິດທາງຂອງປະເທສຊາຕແລ້ວຕ້ອງໃຊ້ຫຣັກປະຊາທິປະໄຕໃນ
ການດຳລົງຊີວິດນັບແຕ່ຂັ້ນຄອບຄົວຕຣອດເຖິງໜ້າທີ່ບໍຣິຫານໃຫ້ມີຈິດໃຈອະໄພແລະຕ້ອງ
ເຂົ້າໃຈບຸກຄົນອື່ນໃຫ້ຕື່ນຕົວໃນຄວາມຊົ່ວຮ້າຍ ທີ່ແນວທາງບໍ່ສອດຄ່ອງແລະຄວາມອາ
ຄາດບາດໝາງ ແນວຄິດເຫັນແກ່ຕົວ ທີ່ເຄີຍມົວເມົາອຳນາດຂອງຕົນຍອມຮັບແລ້ວສາຣະ
ພາບຄວາມຈິງ ບໍ່ວ່າກໍຣະນີໃດໆທັງຊິ້ນແລະບໍ່ຄວນໃຊ້ອຳນາດເຖື່ອນ ຂົ່ມເພີ່ນຍໍໂຕໂອ້ທັງ
ໃຊ້ອຳນາດອາຄາດໃຫ້ໝູ່ທັງຫລາຍຖືໂຕເປັນໃຫ່ຍບໍ່ເບິ່ງໄພ່ຣາຊດອນພວກເຮົາທຸກຄົນຕ້ອງ
ຮັບຮູ້ໃນຣະບອບປະຊາທິປະໄຕພ້ອມທັງຮັບຮູ້ກົດໝາຍບ້ານເມືອງ ຕຣອດເຖິງສິດແລະໜ້າ
ທີ່ຂອງຕົນສ່ວນປະຊາຊົນກໍ່ຕ້ອງໃຫ້ໄດ້ປະສົມປະສານໃນທຸກວຽກງານຂອງຊາຕເພື່ອຮັບປະ
ກັນຄວາມສງົບສຸກແລະຄວາມປອດໄພໃຫ້ແກ່ປະຊາຊົນທັງຊາຕໂດຍບໍ່ຂື້ນກັບອົງການຈັດ
ຕັ້ງຕ່າງໆ ສ່ວນຕຳຣວດແລະກອງກຳລັງປະກອບອາວຸດຕ້ອງເປັນຜູ້ຄຸມກັນແລະສ່ວຍເຫລືອ
ປະຊາຊົນບໍ່ແມ່ນໃຫ້ເປັນຜູ້ໄປຂົ່ມຄູ່ປະຊາຊົນຖ້າຜູ້ໃດຜ່າຝືນໃນກົດໝາຍຂອງຫລັກປະຊາທິ
ປະໄຕຫຼືສວຽໃຊ້ໜ້າທີ່ເພື່ອປະໂຍດສ່ວນຕົວແລ້ວຈະຕ້ອງໄດ້ຮັບໂທດຕາມກົດໝາຍພວກເຮົາ
ຕ້ອງອອກກົດໝາຍຄຸມກັນໄວ້ສ່ວນນັກຂ່າວສານຕ່າງໆແລະວິທະຍຸກະຈາຍສຽງຫຼືໂທຣະທັດ
ໃຫ້ຕັ້ງໄວ້ເພື່ອຕິດຕາມການກະຈ່າຍສຽງແລະຂ່າວຕ່າງໆ ໃນການເຄື່ອນໄຫວຂອງຣັຖບານ

ຫຼືເອກຊົນແລະພຶດຕິການຂອງທຸກຄົນໃນໜ້າທີ່ວຽກງານເພື່ອອອກຂ່າວໃຫ້ມະຫາຊົນຊາບ
ບໍ່ແມ່ນຈະໃຫ້ກຸ່ມໃດກຸ່ມນຶ່ງໃຊ້ສິດສ່ວນຕົວ -ສ່ວນໜັງສືພິມແລະຂ່າວສານຕ່າງໆແມ່ນໃຫ້
ມີຈຸດໝາຽໃນທິດທາງເພື່ອຮັບໃຊ້ປະຊາຊົນຢ່າງເປັນປະຊາທິປະໄຕອັນເປັນທັມບໍ່ແມ່ນໄປ
ຮັບໃຊ້ພັກການເມືອງ ຫຼືບຸກຄົນຝ່າຽໃດຝ່າຽນຶ່ງພວກເຮົາຕ້ອງຮົບລ້າງແນວຄິດທີ່ງົມງາຍ
ແນວຄິດທີ່ຢ້ານກົວແລະເພິ່ງອີງແຕ່ຜູ້ອື່ນຮົບລ້າງອະໄວຍະມຸກທັງໝົດພວກເຮົາຕ້ອງສ້າງ
ແນວຄິດດຸໝັ່ນໃຫ້ເປັນຜູ້ຮູ້ຜູ້ດີແລະອົດທົນພາກພຽນພະຍາຍາມໃຫ້ມີຫົວຄິດປະດິດສ້າງບໍ່
ຫູເບົາເສື່ອງງ່າຽໃຫ້ສລຽວສລາດໃນການແກ້ບັນຫາຂອງຊາຕດວ້ຽຄວາມຖືກຕ້ອງປອງ
ດອງແລະເຍືອກເຢັນແຕ່ເດັດດຽວໃຫ້ມີເຫດຜົນແລະມີສະຕິຢູ່ທຸກເມື່ອເພື່ອສ້າງຕັ້ງນວ່ຍ
ປະຊາສຳພັນໃນການເຜີຍແຜ່ຫລັກປະຊາທິປະໄຕໃຫ້ເຖິງພື້ນຖານໃນທົ່ວປະເທດແລ້ວຕ້ອງ
ຮັບປະກັນສິດແລະໜ້າທີ່ຂອງເພດຍິງໃນການເຂົ້າຮ່ວມການປົກຄອງແລະການເມືອງພ້ອມ
ດວ້ຽລາຍໄດ້ໃຫ້ສເມີພາບກັບເພດຊາຍຕາມໜ້າທີ່ວຽກງານຂອງຄົນໆນັ້ນ ສິດເປັນເຈົ້າ
ຂອງປະເທດຕ້ອງແມ່ນປະຊາຊົນລາວທັງຊາຕ ໃນທຸກຊົນຊັ້ນຊົນເຜົ່າແຕ່ເໜືອຕຣອດໄຕ້
ຂອງລາວຄວາມສງົບສຸກແມ່ນເປັນຂອງທຸກໆຄົນໃນຊາຕສະນັ້ນທາງຂບວນການລາວ
ອິສຣະຂໍຮຽກຮ້ອງໃຫ້ທຸກໆທ່ານເອົາໃຈໃສ່ອົດທົນພາກພຽນພະຍາຍາມໄຕ່ຕອງສມອງຄິດ
ແລ້ວນຳໄປພິຈາຣະນາໃນການ ໂຮມລາວ ຕ້ອງເປັນການສ້າງປະໂຍດໃຫ້ແກ່ປະຊາຊົນ
ລາວແລະບໍ່ໃຫ້ມີຄວາມຄຽດແຄ້ນອາຄາດບາດໝາງຊຶ່ງກັນແລະກັນ ຄືຄວາມເກົ່າບໍ່ເລົ່າ
ກັບມາ-ຄວາມສຳເຣັດຂອງປະຊາຊົນລາວຈະມີຂື້ນກໍ່ຕໍ່ເມື່ອຜູ້ແທນຫຼືຜູ້ມີອຳນາດຂອງ
ຊາຕ ຕ້ອງປຽ່ນແປງແລະລົງມະຕິໃຫ້ເປັນເອກສັນທັງສອງຝ່າຍຂອງສະມາຊິກພ້ອມຄນະ
ແລະປະຊາຊົນໃນທຸກຊົນຊັ້ນຊົນເຜົ່າແຕ່ເໜືອຕຣອດໄຕ້ຂອງລາວຕ້ອງພາກັນພິຈາຣະນາ
ເຫດການຕ່າງໆ ເຊັ່ນທາງການເມືອງ ການເສຖກິດ ການວັທນະທັມແລະ ຟື້ນຟູຊາຕໃຫ້
ກວ້າງຂວາງອອກໄປທົ່ວທຸກທະວີບອາຊີໃຫ້ໄດ້ຮັບຮູ້ພຣະຣາຊອານາຈັກລາວທີ່ສ້າງຄວາມ
ຈະເຣີນກ້າວໜ້າ ທຽມບ່າທຽມໄລ່ເພື້ອນບ້ານຮ່ວມທະວີບ -ພຣະຣາຊອານາຈັກລາວຈະຢູ່
ໄດ້ກໍ່ດວ້ຽການເຊີດຊູທັງຄນະສະມາຊິກແລະປະຊາຊົນລາວທີ່ປະກອບດວ້ຽບຸກຄົນຜູ້ມີຄຸນ
ວຸດທິແລະຄວາມສາມາດຊຶ່ງເຄີຽເປັນຂ້າຣາຊການມາກອ່ນ -ຣັຖບານລາວຊຶ່ງໃນຕໍ່ໜ້ານີ້
ຕ້ອງໄດ້ຖືກດັດແປງແລະແກ້ໄຂໃຫ້ເປັນທັມໃນການປົກຄອງ

ໃນຣະບອບປະຊາທິປະໄຕແລ້ວໃຫ້ເຂົ້າມາປະສົມກັນທັງສອງຝ່າຍຄື ຝ່າຍຂບວນລາວ
ແດງແລະຝ່າຍຂບວນການລາວອິສຣະສ່ວນປະຊາຊົນລາວທັງໝົດໃນທຸກແຂວງຂອງ
ປະເທດກໍ່ມີຄວາມປາຖນາຢ່າງແຮງກ້າ ວ່າຢາກເຫັນພຣະຣາຊອານາຈັກລາວເປັນເອກ
ພາບແລະພ້ອມທີ່ຈະສນັບສນູນໃນການທ້ອນໂຮມລາວໃຫ້ເປັນປຶກແຜ່ນຄືນໃໝ່ ພໍໄດ້ຊາບ
ກັນວ່າ ສະມາຊິກຂບວນການລາວອິສຣະຫຼືລາວແດງຂອງພວກເຮົາໃນອາດີດແລະຄນະ
ພັກແນວລາວຮັກຊາຕ ຕ້ອງເຂົ້າທ້ອນໂຮມມາເປັນນ້ຳນຶ່ງໃຈດຽວກັນແລ້ວເຣີ່ມປະກາດ
ວ່າ ຄວາມເປັນເອກຣາຊຂອງລາວນັບແຕ່ມື້ນີ້ຕໍ່ໄປການປົກຄອງຕ່າງໆຂອງລາວຕ້ອງ
ຂຶ້ນກັບລາວເໝືອນເດີມ ທາງຄນະທັງສອງສາມຝ່າຍໄດ້ກ່າວວ່າອຳນາດການປົກຄອງ
ຣະບອບຄອມມຸນິສວຽດນາມທີ່ຢູ່ໃນປະເທດລາວນັ້ນ ຕ້ອງໃຫ້ສູນຊິ້ນໄປພ້ອມກັບການຍຶດ
ຄອງຂອງວຽດນາມເໜືອຄອມມຸນິສເພາະສະນັ້ນຄົນລາວພວກເຮົານັບແຕ່ນີ້ຕໍ່ໄປລາວຕ້ອງ
ປົກຄອງຕົນເອງໃນຖານະຂອງປະເທດທີ່ເປັນເອກຣາຊແລະປະຊາທິປະໄຕປະຊາຊົນລາວ
ຂໍປະກາດວ່າໃຫ້ວຽດນາມຄອມມຸນິສກັບຄືນສູ່ປະເທສຂອງຕົນຫຼືຖ້າຢາກຢູ່ໃນປະເທດລາວ
ຕໍ່ໄປກໍ່ໃຫ້ຢູ່ໃນຖານະເປັນພົລເມືອງລາວແລະຕ້ອງຢູ່ໃຕ້ກົດໝາຍຂອງປະເທດຫຼື ຢູ່ແບບ
ຊາວຕ່າງດ້າວໃນຄນະນີ້ການປົກຄອງປະເທດລາວ ຍັງຕົກຢູ່ໃນຄວາມສັບສົນເນື່ອງຈາກ
ພັກຄອມມຸນິສວຽດນາມທີ່ມາຫາກິນຢູ່ໃນວຽງຈັນແລະຢູ່ຫົວເມືອງຕ່າງໆໃນປະຈຸບັນນີ້ມີ
ປະມານສາມລ້ານກົ່ວຄົນແລ້ວພາຍໃຕ້ການນຳພາຂອງວຽດນາມເໜືອຄອມມຸນິສສ່ວນ
ປະຊາຊົນລາວໃນທົ່ວປະເທດຕັ້ງແຕ່ເໜືອຕຣອດໃຕ້ຫ້າມພວກວຽດນາມພັກຄອມມຸນິສບໍ່
ໃຫ້ນຳເອົາທຸງສີແດງດາວເຫຼືອງແລະຮູບໂຮ່ຈິມິນມາປະກາດຍຶດອຳນາດເອົາປະເທດລາວ
ແລະບໍ່ໃຫ້ໂຈມຕີເຈົ້າໜ້າທີ່ຂບວນການລາວອິສຣະເກົ່າຂອງພວກເຮົາແລະຫ້າມກົດຂີ່
ຂົ່ມເຫັງຄົນລາວຮ້າຍແຮງໄປຍິ່ງກົ່ວນັ້ນບໍ່ໃຫ້ພວກວຽດນາມເໜືອພັກຄອມມຸນິສໄດ້ຄັດ
ຄ້ານການເດີນຂະບວນຂອງປະຊາຊົນລາວແລະໃນການໄປມາຫາສູ່ຂອງປະຊາຊົນເພາະ
ໂລກປະຈຸບັນນີ້ໃຫ້ມີສິດທິມະນຸດຊົນສ່ວນແຂວງແລະທ້ອງຖິ່ນຕ່າງໆພາຍໃນປະເທດປະ
ຊາຊົນຂໍປະກາດອີກວ່າເມືອງລາວຕ້ອງເປັນຂອງຄົນລາວບໍ່ເປັນຂອງປະເທດອື່ນຄຳປະ
ກາດດັ່ງກ່າວນີ້ຂໍໃຫ້ໂລກມະຫາອຳນາດໄດ້ຮັບຮູ້ພ້ອມປະເທດທີ່ປົກຄອງດ້ວຍຣະບອບປະ
ຊາທິປະໄຕທາງຂບວນການລາວອິສຣະແລະຂບວນລາວແດງພ້ອມປະຊາຊົນ

ຂໍປະກາດເຖິງຊາວໜຸ່ມນັກຮຽນນັກສຶກສາຄູອາຈານແລະພໍ່ແມ່ປະຊາຊົນຄົນລາວໃນທຸກຊົນ
ຊັ້ນຊົນເຜົ່າ ແຕ່ເໜືອຕຣອດໄຕຂອງລາວໃຫ້ດຸດັ່ງທັ່ງເທເຂົ້າປະຖະກັບວຽດນາມຄອມມຸນິສ
ເພື່ອປອ້ງກັນປະເທດຊາຕຂອງພວກເຮົາຄວາມຊົ່ວຮ້າຍການກະທຳຂອງວຽດນາມໄດ້ຣະບາດ
ໄປທົ່ວຫົວເມືອງຕ່າງໆຂອງລາວພອ້ມເຮືອນຊານບາ້ນຊອ່ງ ແລະຊັບສິນຂອງປະຊາຊົນລາວ
ປະຊາຊົນລາວເຫັນເປັນເຊັ່ນນີ້ແລ້ວໄດ້ພອ້ມພຽງກັນທັງຄນະຣວ່ມການປະຕິວັດຂອງເຜວລາວ
ຮັກຊາຕແລະຂບວນການລາວອິສຣະ ຂໍຮຽກຮອ້ງເຖິງນັກການເມືອງຂອງພັກຕ່າງໆເຊັ່ນຝາ່ຍ
ເປັນກາງຝາ່ຍຂວົາຝາ່ຍຊາ້ຍໃຫ້ເຂົ້າມາເປັນນໍ້າໜຶ່ງໃຈດຽວກັນແລ້ວປະກາດໃຫ້ກອ້ງຢາ່ງເປັນ
ທາງການ ໄປທົ່ວໂລກໄດ້ຊາບວາ່ ສັນຍາແລະຂໍ້ຜູກພັນຕາ່ງໆ ທີ່ມີມາໃນຣະວາ່ງວຽດນາມ
ເໜືອຄອມມຸນິສແລະລາວຄອມມຸນິສນັ້ນ ໃຫ້ຖືວາ່ໝົດຄຸນຄາ່ແລະເປັນໂມຄະໄປເບີດແລ້ວ
ນັບແຕ່ນີ້ຕໍ່ໄປ-ລາວຈະຕອ້ງປົກຄອງຕົນເອງດວ້ຽຣະບອບປະຊາທິປະໄຕແລະໃຫ້ໄດ້ມີສິດທິ
ມະນຸດຢາ່ງເປັນທັມສວ່ນພຣະຣາຊອານາຈັກລາວຕອ້ງມາເປັນຜືນແຜ່ນດິນດຽວແລະຈະບໍ່
ໃຫ້ຜູ້ໄດມາແບ່ງແຍກໄດ້ອັນນີ້ແມ່ນປະຊາຊົນລາວຂໍປະກາດໃຫ້ໂລກຮັບຮູ້ທັງ-5-ມະຫາອຳ
ນາດພອ້ມທັງໃຫ້ຮັບຮູ້ເຄື່ອງໝາຽຂອງປະເທດລາວນັ້ນຄື ທຸງຮູບຊາ້ງສາມຫົວຢູ່ໃນເຜສີ
ແດງແຫ່ງຄວາມເປັນເອກຣາຊຂອງລາວຕອ້ງຖືກອັນເຊີນຂຶ້ນສູ່ຍອດເສົາປີວສະບັດພາຽ
ໄຕ້ທອ້ງຟາ້ສີຄາມແລະໃຫ້ມີສຽງໃຊໂຍໂຮ່ຮອ້ງ ດວ້ຽຄວາມເບີກບານຊົມຊື່ນຂອງຊາວລາວ
ພວກເຮົາ-ພວກເຮົາຂໍປະກາດເຖິງພີ່ນອ້ງຊາວລາວທຸກຊົນຊາຕຊົນເຜົ່າໃນທົ່ວພຣະຣາຊ
ອານາຈັກລາວແລະຢູ່ຕາ່ງປະເທດທົ່ວມູມໂລກໄດ້ຊາບວາ່ຊາວສາມສິບກວ່າປີມາແລ້ວ
ນີ້ປະເທດລາວຍັງຢູ່ໃນອຳນາດພັກຄອມມຸນິສວຽດນາມບໍ່ມີວັນເຫືອດຫາຽ-ມາບັດນີ້ປະຊາ
ຊົນລາວພອ້ມທັງຄນະແລະສະມາຊິກທັງສອງຝາ່ຍໄດ້ທອ້ນໂຮມເຮື່ອແຮງແລະຈິດໃຈເພື່ອ
ປະເທດຊາຕບາ້ນເມືອງແລ້ວໄດ້ພອ້ມກັນເຂົ້າຮວ່ມໄມ້ຮວ່ມມືຂອງຊາວລາວທັງປະເທດເພື່ອ
ຊວ່ຍກັນສາ້ງສາມະຄີ ແລະຂັບໄລ່ຊາວຕາ່ງຊາຕທີ່ເປັນພັກຄອມມຸນິສອອກຈາກຜືນແຜ່ນດິນ
ລາວອັນນີ້ພວກເຮົາຮູ້ສຶກຍິນດີ ທີ່ໄດ້ຮວ່ມໄມ້ຮວ່ມມືກັບປະຊາຊົນທຸກຖວ້ນໜາ້ຢາ່ງສຸດຄວາມ
ສາມາດແລະບໍຣິສຸດໃຈສູ່ປະເທດລາວດັ່ງເດີມຂາ້ພະເຈົ້າ ໃນນາມຂບວນການລາວອິສຣະ
-ຂໍອຳນວຍພອນໄປເຖິງພີ່ນອ້ງຊາວລາວ ທົ່ວທຸກແຫ່ງຫົນ ຕາຳບົນເໜືອໄຕ້ ຈົ່ງມີຄວາມສຸກ
ແລະວັທນາຖາວອນຕຣອດຣາຕີເຖີ້ນ-ຈາກລາວອິສຣະຄັ້ງວັນທີ -29- 12- 07